**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດທີ 12 ກຸມພາ 2023 (02-12-2023)**

---

## ມັນສອດຄ່ອງກັບພຣະລັກສນະຂອງພຣະເຈົ້າບໍ່?

*ແມ່ນຫຍັງຄືສິ່ງບອກນິສັຍໃຈຄໍທີ່ທ່ານບໍ່ສົມຄວນທີ່ຈະເຮັດເລີຍ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າບໍ່ເຄີຍຮຽກເອີ້ນໃຫ້ພວກເຮົາເຮັດບາງສິ່ງບາງຢ່າງທີ່ຢູ່ນອກພຣະລັກສນະຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າເຊື່ອວ່າພຣະເຈົ້າຊົງເວົ້າກັບຜູ້ຄົນ. ແນວໃດກໍຕາມ, ຂ້າພະເຈົ້າໄດ້ທ້າທາຍຄົນຈຳນວນຫຼາຍໃນລະຍະຫຼາຍປີທີ່ຜ່ານມາໃນຂນະທີ່ພວກເຂົາເຈົ້າປະກາດວ່າພຣະເຈົ້າໄດ້ຊົງບອກພວກເພິ່ນກ່ຽວກັບບາງສິ່ງບາງຢ່າງ, ແຕ່ຂ້າພະເຈົ້າຮູ້ວ່າມັນບໍ່ຖືກຕ້ອງ.

- ທ່ານຈະຕອບໂຕ້ຢ່າງໃດ? ຖ້າຫາກເພື່ອນຂອງທ່ານໄດ້ບອກທ່ານວ່າພຣະເຈົ້າໄດ້ຊົງບອກລາວວ່າລາວບໍ່ຈຳເປັນຍົກໂທດໃຫ້ແກ່ໃຜຜູ້ນຶ່ງທີ່ໄດ້ເຮັດຜິດຕໍ່ລາວ(ເຮັດໃຫ້ຂຸ່ນເຄືອງໃຈ).
- ທ່ານຈະເວົ້າຢ່າງໃດ? ຖ້າເພື່ອນຮ່ວມງານຄົນນຶ່ງຢືນຢັນວ່າພຣະເຈົ້າໃດ້ຊົງບອກນາງວ່າບໍ່ເປັນຫຍັງດອກທີ່ຈະທຳແທ້ງຂ້າລູກຂອງຕົນເອງທີ່ຍັງບໍ່ທັນເກີດອອກມາ.

**ພຣະເຈົ້າຊົງບໍຣິສຸດແລະເປັນຄວາມຮັກ.** ດ້ວຍເຫດຜົນນີ້, ພຣະເຈົ້າຈະບໍ່ຊົງເວົ້າແລະກະທຳຈັກເທື່ອໃນສິ່ງໃດໆທີ່ບໍ່ບໍຣິສຸດແລະບໍ່ເປັນຕາຮັກ- ແລະພຣະອົງຈະບໍ່ຊົງຮຽກເອີ້ນພວກເຮົາຈັກເທື່ອໃຫ້ເຮັດໃນສິ່ງໃດໆທີ່ບໍ່ບໍຣິສຸດ ແລະບໍ່ເປັນຕາຮັກ. ໃນເມື່ອຜູ້ຄົນເວົ້າວ່າພຣະເຈົ້າໄດ້ຊົງບອກພວກເຂົາເຈົ້າໃຫ້ເຮັດໃນສິ່ງໃດໆທີ່ກົງກັນຂ້າມກັບທັມມະຊາດຂອງພຣະອົງ, ພວກເຮົາສາມາດໝັ້ນໃຈວ່າພວກເຂົາເຈົ້າບໍ່ໄດ້ຍິນຈາກພຣະເຈົ້າ. ພຣະອົງຊົງເວົ້າໃນທາງທີ່ສອດຄ່ອງກັບພຣະລັກສນະຂອງພຣະອົງສເມີໄປ. ພຣະອົງບໍ່ຊົງມີຂໍ້ຍົກເວັ້ນ. **ພຣະເຈົ້າບໍ່ເຄີຍເວົ້າອອກນອກຂອບເຂດຈາກພຣະລັກສນະຂອງພຣະອົງຈັກເທື່ອ!**

ພວກເຮົາໄດ້ຍິນຈາກພຣະຄັມພີອົບພະຍົບ ບົດທີ່ 34 ພຣະຄຳຂອງພຣະເຈົ້າກ່ຽວກັບຄວາມສັດຊື່ ແລະຄວາມບໍ່ປ່ຽນແປງຂອງພຣະລັກສນະຂອງພຣະອົງ. ແລະດ້ວຍສິ່ງນັ້ນ, ພວກເຮົາຈະໄດ້ຮັບຄວາມໝັ້ນໃຈທີ່ຈະໄວ້ວາງໃຈໃນພຣະອົງແລະທີ່ຈະໄວ້ວາງໃຈໃນສິ່ງທີ່ພຣະອົງຊົງກ່າວໄວ້.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. ອົບພະຍົບ 34:1-5

*[1]ພຣະຜູ້ເປັນເຈົ້າຊົງບອກໂມເຊວ່າ ຈົ່ງຕັດຫີນອີກສອງແຜ່ນໃຫ້ເຫມືອນແຜ່ນເກົ່າ ແລ້ວເຮົາຈະຈາລຶກຖ້ອຍຄຳຊຶ່ງຢູ່ໃນແຜ່ນເດີມທີ່ເຈົ້າ*
*ໄດ້ເຮັດແຕກນັ້ນໃຫ້. [2]ຈົ່ງເຮັດໃຫ້ແລ້ວໃນຕອນເຊົ້າມື້ອື່ນ ແລ້ວໃຫ້ຂຶ້ນມາຫາເຮົາເທິງຈອມພູຊີນາຍ. [3]ຢ່າໃຫ້ຜູ້ໃດຂຶ້ນມານຳ ບໍ່ໃຫ້ມີຜູ້*
*ໃດຢູ່ເທິງພູ ບໍ່ໃຫ້ມີຝູງແບ້ ຝູງແກະ ແລະຝູງງົວຄວາຍກິນຫຍ້າຢູ່ຕໍ່ໜ້າພູນີ້.” [4]ດັ່ງນັ້ນ, ໂມເຊຈຶ່ງຕັດເອົາຫີນສອງແຜ່ນເຫມືອນສອງ*
*ແຜ່ນທຳອິດ ແລ້ວມື້ອື່ນຕອນເຊົ້າມືດເພິ່ນກໍຖືຫີນນັ້ນຂຶ້ນໄປເທິງພູຊີນາຍຕາມທີ່ພຣະຜູ້ເປັນເຈົ້າຊົງສັ່ງ. [5]ພຣະຜູ້ເປັນເຈົ້າໄດ້ສະເດັດ*
*ລົງມາດ້ວຍເມກ ຊົງຢືນຢູ່ກັບໂມເຊທີ່ນັ້ນ ແລະໂມເຊໄດ້ຮ້ອງອອກພຣະນາມຂອງພຣະຜູ້ເປັນເຈົ້າ.*

ນີ້ແມ່ນນຶ່ງໃນຂໍ້ຄວາມທີ່ໃຫ້ກຳລັງໃຈ ແລະສ້າງແຮງບັນດານໃຈຫຼາຍທີ່ສຸດໃນພຣະຄັມພີເດີມ. ຊາວອິສຣາເອນໄດ້ປະຖິ້ມພຣະເຈົ້າຫຼັງ

ຈາກພຣະອົງໄດ້ຊົງປົດປ່ອຍພວກເພິ່ນຈາກການເປັນຂ້າທາດຂອງເອຢິບ. ໃນຂະນະທີ່ໂມເຊຢູ່ເທິງພູເຂົາຊີນາຍເພື່ອຮັບເອົາພຣະບັນຍັດຂອງພຣະເຈົ້າ, ປະຊາຊົນໄດ້ເຮັດຮູບງົວຄຳຮູບນຶ່ງ ແລະຂາບໄຫວ້ຮູບໂຄຮົບນັ້ນ (ອພຍ 32:1-6). ດ້ວຍເຫດຜົນນີ້, ໂມເຊຈຶ່ງຄຽດຮ້າຍທີ່ສຸດ ແລະໄດ້ໂຍນແຜ່ນຫີນພຣະສັນຍາລົງພື້ນ, ເຮັດໃຫ້ມັນແຕກຫັກ ແລະເປັນສັນຍາລັກຂອງການທຳລາຍພັນທະສັນຍາທີ່ປະຊາຊົນໄດ້ເຮັດໄວ້ກັບພຣະເຈົ້າ (ຂໍ້ 19).

ຫຼັງຈາກນັ້ນ, ໂມເຊໄດ້ປົດປ່ອຍຊາວເລວີເພື່ອໃຫ້ອອກມາຂ້າຊາວອິສະຣາເອນສາມພັນຄົນເພື່ອເປັນການລົງໂທດສຳລັບການເຮັດບາບຂອງພວກເຂົາເຈົ້າ (ຂໍ້ 28). ພຣະເຈົ້າໄດ້ຊົງບອກໂມເຊວ່າພຣະອົງຈະຊົງສົ່ງທູດສວັນເຂົ້າໄປໃນການາອານກັບພວກເຂົາເຈົ້າ, ແຕ່ພຣະອົງເອງຈະບໍ່ຊົງສະເດັດໄປ (ບົດທີ່ 33 ຂໍ້ 2 ຫາ 3). ພຣະເຈົ້າໄດ້ຊົງອະທິບາຍວ່າ, *"ຖ້າພຣະຜູ້ເປັນເຈົ້າໄປກັບພວກເຈົ້າແມ່ນຊົ່ວເວລາໜ້ອຍດຽວ ພຣະອົງກໍຈະລ້າງຜານພວກເຈົ້າເສັຽ"* (33:5). ໂມເຊໄດ້ເຂົ້າໃຈໃນພຣະດຳຣັດນັ້ນ, ເຖິງຢ່າງໃດກໍຕາມ, ຖ້າພຣະເຈົ້າບໍ່ຊົງສະເດັດໄປດ້ວຍ ປະຊາຊົນຈະບໍ່ມີຄວາມຫວັງຄືອະນາຄົດ (ຂໍ້ 15). <u>ຄວາມຫວັງພຽງອັນດຽວຂອງພວກເຂົາເຈົ້າແມ່ນພຣະເຈົ້າອົງຊົງບໍຣິສຸດຈະຊົງອະພັຍໂທດຄວາມບາບຂອງພວກເຂົາເຈົ້າ</u> **ແລະ** <u>ຕໍ່ອາຍຸພັນທະສັນຍາຂອງພຣະອົງກັບພວກເຂົາເຈົ້າ</u>.

*ພວກເຮົາຈະຈັດການຢ່າງໃດກັບຄວາມຈຳເປັນລະຫວ່າງຄວາມສນິດສນົມແລະຄວາມນັບຖືໃນສາຍສັມພັນຂອງເຮົາກັບພຣະເຈົ້າ?*

## 2. <u>ອົບພະຍົບ 34:6-7</u>

*[6] ແລ້ວພຣະຜູ້ເປັນເຈົ້າໄດ້ສະເດັດຜ່ານໜ້າໂມເຊໄປ ແລະຊົງກ່າວວ່າ, "ພຣະຜູ້ເປັນເຈົ້າ-ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າຜູ້ເຕັມປ່ຽມໄປດ້ວຍຄວາມເມດຕາກະຣຸນາ ຜູ້ບໍ່ໂກດງ່າຍ ຜູ້ສະແດງຄວາມຮັກໝັ້ນຄົງ ແລະຄວາມສັດຊື່. [7] ຜູ້ມີຄວາມຮັກໝັ້ນຄົງຫລາຍຊົ່ວອາຍຸພັນຄົນ ຜູ້ໂຜດໃຫ້ອະພັຍຄວາມບໍ່ຍຸຕິທັມ ຄວາມຊົ່ວຊ້າ ແລະຄວາມບາບ ແຕ່ຈະລົງໂທດລູກຫລານເຫລັນເຖິງສາມສີ່ຊົ່ວອາຍຸຄົນ ຍ້ອນຄວາມບາບທີ່ພໍ່ແມ່ຂອງເຂົາໄດ້ກະທຳ."*

ພຣະເຈົ້າໄດ້ຊົງປາກົດຕໍ່ໜ້າໂມເຊ ແລະໄດ້ຊົງປະກາດວ່າພຣະລັກສນະຂອງພຣະອົງຄືແນວໃດ. ສຳລັບຊາວອິສຣາເອນ, ພຣະເຈົ້າເປັນຄວາມລຶກລັບທີ່ຍິ່ງໃຫຍ່. ປາກົດວ່າພຣະອົງຊົງເປັນພຣະເຈົ້າທີ່ມີອຳນາດແລະຊອບທັມ. ຫຼັງຈາກຊາວອິສຣາເອນໄດ້ນະມັສການງົວຄຳ, ໂມເຊອາດຈະຫວັງວ່າພຣະເຈົ້າຈະຊົງເປີດເຜີຍພຣະລັກສນະຂອງພຣະອົງໃນນາມພຣະເຈົ້າອົງຊົງບໍຣິສຸດ ຊຶ່ງຊົງຕັດສິນຄວາມບາບແລະລົງໂທດບັນດາຄົນບາບທັງປວງ. ດັ່ງນັ້ນຈຶ່ງເປັນຄຳແນະນຳ, ສິ່ງທີ່ພຣະເຈົ້າໄດ້ຊົງເປີດເຜີຍມາກ່ອນ. ພຣະເຈົ້າຄວນຈະເນັ້ນໜັກໃສ່<u>ພຣະອຳນາດ</u>, <u>ຄວາມບໍຣິສຸດ</u>, ຫຼື <u>ຄວາມໃຈຮ້າຍ</u>ຂອງພຣະອົງ. ກົງກັນຂ້າມ, ພຣະເຈົ້າໄດ້ຊົງເປີດເຜີຍ<u>**ພຣະລັກສນະຂອງພຣະອົງ**</u>ດັ່ງຕໍ່ລົງໄປນີ້:

- **ຊົງເຫັນອົກເຫັນໃຈ.** ເຖິງວ່າຈະມີການກະບົດທີ່ໂງ່ຈ້າຂອງໄພ່ພົນຂອງພຣະອົງ, ພຣະເຈົ້າຍັງຊົງມີຄວາມເຫັນອົກເຫັນໃຈຕໍ່ພວກເຂົາເຈົ້າ. ພຣະເຈົ້າອົງສົມບູນແບບຊົງມີຄວາມເປັນຫ່ວງເປັນໄຍຕໍ່ການຊົງສ້າງ(ໄພ່ພົນ)ຂອງພຣະອົງທີ່ອ່ອນແອແລະເຕັມໄປດ້ວຍບາບ.
- **ຊົງເມດຕາສົງສານ.** ມັນແມ່ນພຣະຄຸນຂອງພຣະເຈົ້າທີ່ໃຫ້ປະຊາກອນຂອງພຣະອົງ<u>ສິ່ງທີ່ພວກເຂົາເຈົ້າບໍ່ສົມຄວນທີ່ຈະໄດ້ຮັບ.</u> ພຣະອົງບໍ່ໄດ້ເປັນໜີ້ພວກເຮົາຫຍັງເລີຍ, ແຕ່ພຣະອົງຍັງມີພຣະທັຍກວ້າງຂວາງ(ເອື້ອເຟື້ອເຜື່ອແຜ່) ກັບພວກເຮົາຢ່າງມະຫາສານ.
- **ຊົງຊ້າໃນພຣະພິໂຣດ(ໃຈຮ້າຍ).** ຖ້າຫາກພຣະເຈົ້າໃຈຮ້າຍໄວ, ປະຊາກອນຂອງພຣະອົງຈະຖືກເຜົາຜານຢ່າງວ່ອງໄວ. ພຣະເຈົ້າຊົງອົດທົນກັ້ນພຣະທັຍແລະພຽງແຕ່ໃຈຮ້າຍເມື່ອຄວາມຊອບທັມຂອງພຣະອົງໄດ້ຖືກກະຕຸ້ນຢ່າງໜັກໜ່ວງເທົ່ານັ້ນ.
- **ຊົງອຸດົມສົມບູນໃນຄວາມຮັກອັນໝັ້ນຄົງ.** ຄຳນີ້ "<u>ຄວາມຮັກທີ່ສັດຊື່</u>" ເປັນຄຳພາສາເຮັບເຣີວ່າ *"ເຮເສດ"- hesed.* ມັນບັນລະຍາຍເຖິງຄວາມຮັກທີ່ສັດຊື່, ຈົງຮັກພັກດີທີ່ພຣະເຈົ້າໄດ້ຊົງສະແດງຕໍ່ບັນດາຜູ້ທີ່ພຣະອົງຊົງມີຄວາມສັມພັນທາງພັນທະສັນຍາກັບພວກເຂົາເຈົ້າ(ພຣະບັນຍັດສອງ 7:7-9). ເມື່ອພຣະເຈົ້າຊົງມອບພຣະອົງເອງໃຫ້ກັບຜູ້ໃດຜູ້ນຶ່ງ, <u>ພຣະອົງຊົງສັດຊື່ຢ່າງແທ້ຈິງທີ່ຈະຊົງຮັກສາພຣະສັນຍາທຸກຢ່າງ</u>.

- **ຊົງອຸດົມສົມບູນໃນຄວາມຈິງ.** ໂລກຕ້ອງການໃຫ້ພວກເຮົາຈົມຢູ່ໃນຄວາມຕົວະ, ແຕ່ພຣະເຈົ້າຊົງເວົ້າຄວາມຈິງສເມີໄປ. ຕໍ່ມາ ພຣະເຢຊູໄດ້ຊົງເປີດເຜີຍວ່າບໍ່ພຽງແຕ່ພຣະອົງໄດ້ບອກຄວາມຈິງເທົ່ານັ້ນ, ແຕ່ພຣະອົງຊົງເປັນຄວາມຈິງ (ໂຢຮັນ 14:6).
- **ຊົງໃຫ້ອະພັຍ.** ມັນເປັນການປອບໃຈໂມເຊຢ່າງແນ່ນອນທີ່ພຣະເຈົ້າໄດ້ຊົງໃຫ້ອະພັຍ "ຄວາມຊົ່ວຮ້າຍ, ການກະບົດ ແລະ ບາບ." ຊາວອິສຣາເອນຕ້ອງການ ການໃຫ້ອະພັຍສຳລັບການລ່ວງລະເມີດທັງໝົດເຫຼົ່ານີ້ ແລະ ພວກເຮົາກໍຕ້ອງການ ການຊົງໃຫ້ອະພັຍນັ້ນເຊັ່ນດຽວກັນ.
- **ຊົງຍຸຕິທັມ.** ພຣະເຈົ້າຊົງໃຫ້ອະພັຍ, ແຕ່ພຣະອົງບໍ່ໄດ້ປ່ອຍໃຫ້ຄົນທີ່ທຳຜິດບໍ່ຖືກລົງໂທດ. ພຣະເຈົ້າບໍ່ໄດ້ລົງໂທດບັນດາຜູ້ຄົນສຳລັບບາບທີ່ພວກເຂົາເຈົ້າບໍ່ໄດ້ກະທຳແຕ່ບັນພະບຸລຸດຂອງພວກເຂົາເຈົ້າໄດ້ເຮັດ (ເບິ່ງ ອຊກ ບົດທີ່ 18).

ສຳລັບພວກເຮົາທີ່ຈະຮູ້ຈັກພຣະສຸຣະສຽງຂອງພຣະເຈົ້າໃນເວລາທີ່ພຣະອົງເວົ້າ, ພວກເຮົາຕ້ອງເຂົ້າໃຈພຣະລັກສນະຂອງພຣະອົງ. ເມື່ອພຣະເຈົ້າຊົງກ່າວ, ພຣະອົງຊົງກະທຳດ້ວຍຄວາມເຫັນອົກເຫັນໃຈ, ດ້ວຍພຣະຄຸນ, ແລະດ້ວຍຄວາມຮັກທີ່ສັດຊື່. ພຣະປະສົງຂອງອົງພຣະເຈົ້າແມ່ນເພື່ອໃຫ້ພວກເຮົາຮູ້ຈັກພຣະອົງ ແລະດຳເນີນຊີວິດຢ່າງເຊື່ອຟັງພຣະອົງເພື່ອວ່າພວກເຮົາຈະໄດ້ຮັບພຣະພອນຂອງພຣະອົງ. ຖ້ອຍຄຳຂອງພຣະອົງຈະສະທ້ອນເຖິງພຣະລັກສນະຂອງພຣະອົງສເມີໄປ, ຄືກັນກັບທີ່ພຣະອົງໄດ້ຊົງເປີດເຜີຍຕໍ່ໂມເຊເມື່ອຫຼາຍສະຕະວັດທີ່ຜ່ານມາ.

*ມີບາງວິທີໃດແດ່ທີ່ວັທນະທັມຂອງເຮົາເຂົ້າໃຈຜິດຫຼືບິດເບືອນພຣະລັກສນະຂອງພຣະເຈົ້າ?*

## 3. ອົບພະຍົບ 34:8-9

*8 ໂມເຊຈຶ່ງຟ້າວຄຸເຂົ່າລົງດິນນະມັສການ 9 ແລ້ວຂາບທູນວ່າ, "ຂ້າແດ່ພຣະຜູ້ເປັນເຈົ້າ ຖ້າພວກຂ້ານ້ອຍເປັນທີ່ຊອບພຣະທັຍພຣະອົງແທ້ເຖິງແມ່ນປະຊາຊົນນັ້ນຈະຫົວດື້ ກໍຂໍພຣະອົງຊົງໂຜດສະເດັດໄປກັບພວກຂ້ານ້ອຍຖ້ອນ ຂໍຊົງໃຫ້ອະພັຍຄວາມຊົ່ວຮ້າຍ ແລະຄວາມບາບຂອງພວກຂ້ານ້ອຍ ຂໍຊົງໂຜດຮັບເອົາພວກຂ້ານ້ອຍເປັນໄພ່ພົນຂອງພຣະອົງເຖີ້ນ."*

ຫຼັງຈາກທີ່ໂມເຊໄດ້ປະສົບກັບການຜະເຊີນໜ້າກັບພຣະເຈົ້າຢ່າງເລິກຊຶ້ງ, ການຕອບສນອງໃນທັນທີທັນໃດຂອງລາວແມ່ນການກົ້ມຂາບລົງພື້ນດິນແລະນະມັສການພຣະເຈົ້າ. ໂດຍການກົ້ມຂາບຕ່ຳລົງ, ໂມເຊໄດ້ຫລຸດຜ່ອນຕົວເອງລົງ ແລະຍົກພຣະເຈົ້າໃຫ້ສູງສຸດໃນຊີວິດຂອງລາວ. ໂມເຊຮູ້ວ່າພຣະເຈົ້າຊົງມີພຣະຄຸນຢ່າງຍິ່ງຕໍ່ລາວ ແລະຕໍ່ປະຊາຊົນຂອງລາວຫຼາຍແທ້ໆ. ໂມເຊເຂົ້າໃຈວ່າຊາວອິສຣາເອນໄດ້ຮັບພຣະພອນຫຼາຍທີ່ສຸດທີ່ມີພຣະເຈົ້າທີ່ຮັກແລະມີພຣະເມດຕາກະຣຸນາເຕັມພຣະທັຍທີ່ຈະຊົງກະທຳພັນທະສັນຍາກັບພວກເຂົາເຈົ້າແລະຈະຊົງຈັດຫາທຸກສິ່ງທຸກຢ່າງທີ່ພວກເຂົາເຈົ້າຕ້ອງການ.

ໃນຂນະທີ່ລາວນະມັສການ, ໂມເຊໄດ້ທູນຂໍຕໍ່ພຣະເຈົ້າໃຫ້ຊົງສະເດັດໄປຍັງການາອານກັບພວກເພິ່ນ. ພຣະເຈົ້າໄດ້ຊົງກ່າວໄວ້ໃນທີ່ຜ່ານມາວ່າພຣະອົງຈະບໍ່ໄປ, ແຕ່ພຣະອົງຈະຊົງສົ່ງທູດສວັນໄປດ້ວຍ(ອພຍ 33:3). ແຕ່ຫລັງຈາກພຣະເຈົ້າໄດ້ຊົງເປີດເຜີຍ ວ່າພຣະອົງມີພຣະເມດຕາ ແລະພຣະກະຣຸນາ, ໂມເຊຈຶ່ງໄດ້ວິງວອນທູນຂໍການຊົງສະຖິດຢູ່ນຳຂອງພຣະເຈົ້າ ແລະ ຂໍການຊົງນຳພາຂອງພຣະເຈົ້າສຳລັບປະຊາກອນຂອງພຣະອົງ. ດ້ວຍການຕອບສນອງຕໍ່ພຣະຄຳຂອງພຣະເຈົ້າ, ໂມເຊໄດ້ຟື້ນຟູສາຍສັມພັນຂອງປະຊາຊົນກັບພຣະເຈົ້າ.

*ພຣະລັກສນະໃດແດ່ຂອງພຣະເຈົ້າທີ່ທ່ານໄດ້ຮຽນຮູ້ທີ່ຈະຊື່ນຊົມຫຼາຍຂຶ້ນໃນຂນະທີ່ທ່ານເຕີບໂຕຂຶ້ນໃນຖານະຄຣິສຕຽນ?*

ທຸກໆຖ້ອຍຄຳຈາກພຣະເຈົ້າເປັນໂອກາດທີ່ຈະຮຽນຮູ້ບາງສິ່ງບາງຢ່າງກ່ຽວກັບພຣະອົງ ແລະເປັນການເຊື້ອເຊີນໃຫ້ສຳຜັດກັບພຣະເຈົ້າໃນຮູບແບບໃໝ່ໆ. ພຣະຄຳຂອງພຣະເຈົ້າທີ່ໄດ້ປະທານແກ່ພວກນັ້ນບໍ່ແມ່ນ**ໂດຍອຸບັດເຫດ ຫຼືໂດຍບັງເອີນ**ຈັກເທື່ອ. ເມື່ອພຣະເຈົ້າຊົງກ່າວກັບຜູ້ຄົນ, ມັນນຳພາພວກເຂົາເຈົ້າໄປນະມັສການ. ພຣະຄຳຂອງພຣະເຈົ້າຍົກສູງພຣະລັກສນະຂອງພຣະອົງແລະຊົງເປີດເຜີຍຄວາມບາບຂອງປະຊາຊົນ. ພຣະຄຳຂອງພຣະເຈົ້າຈະຊີ້ໃຫ້ເຫັນເຖິງສິ່ງທີ່ເປັນອັນຕະລາຍຕໍ່ຄວາມສຳພັນຂອງທ່ານກັບພຣະອົງເພື່ອໃຫ້

ທ່ານສາມາດຖິ້ມໃຈເກົ່າເອົາໃຈໃໝ່ ແລະໄດ້ຮັບການຟື້ນຄືນສູ່ຄວາມສຳພັນທີ່ຮັກແພງກັບພຣະເຈົ້າ. ເມື່ອທ່ານ**ໄດ້ຍິນ** ແລະ **ເຊື່ອຟັງ** ພຣະຄຳຂອງພຣະເຈົ້າ, ທ່ານກໍສາມາດມີຄວາມຊື່ນຊົມຍິນດີໄປກັບການຊົງສະຖິດຢູ່ອັນຊົງພະລັງຂອງພຣະອົງໃນຊີວິດຂອງທ່ານອີກເທື່ອນຶ່ງ.

*ຕົວຢ່າງຂອງໂມເຊສອນພວກເຮົາແນວໃດແດ່ກ່ຽວກັບວິທີທີ່ພວກເຮົາຕອບສນອງຕໍ່ພຣະເຈົ້າ?*

## ນຳໃຊ້ໃນຊີວິດ

ພຣະເຈົ້າບໍ່ເຄີຍຊົງຮຽກເອີ້ນໃຫ້ພວກເຮົາເຮັດບາງສິ່ງບາງຢ່າງທີ່ຢູ່ນອກພຣະລັກສນະຂອງພຣະອົງ. ທ່ານຈະດຳເນີນຊີວິດແນວໃດໃນຄວາມຈິງນີ້? ຈົ່ງໃຊ້ນຶ່ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົ່ງນະມັສການ.** ຈົ່ງສະທ້ອນເຖິງພຣະລັກສນະຂອງພຣະເຈົ້າທີ່ບັນລະຍາຍໃນບົດຮຽນວັນນີ້ແລະຈົ່ງຕອບສນອງຕໍ່ພຣະເຈົ້າດ້ວຍການອະທິຖານແຫ່ງການສັຣເສີນ. ຈົ່ງຂອບພຣະຄຸນພຣະອົງສຳລັບແຕ່ລະພຣະລັກສນະ ແລະສຳລັບແຕ່ລະປະສົບການເຫຼົ່ານັ້ນທີ່ທ່ານມີໃນການດຳເນີນຊີວິດໄປກັບພຣະອົງ.

- **ຈົ່ງປະເມີນຜົນ.** ຈົ່ງພິຈາລະນາຂໍ້ຄວາມບາງຢ່າງທີ່ທ່ານໄດ້ຍິນຈາກຜູ້ນຳທາງສາສນາທີ່ພວກເພິ່ນອ້າງວ່າໄດ້ເວົ້າກັບພຣະເຈົ້າ. ຈົ່ງປະເມີນຜົນວ່າຂໍ້ຄວາມຂອງພວກເຂົາເຈົ້າກົງກັນຂ້າມກັບພຣະລັກສນະຂອງພຣະເຈົ້າທີ່ທ່ານໄດ້ເຫັນໃນບົດຮຽນນີ້ແນວໃດ.

- **ຈົ່ງເຊື່ອຟັງ.** ມີບາງສິ່ງທີ່ພຣະເຈົ້າມີພຣະປະສົງໃຫ້ທ່ານເຮັດໃນການຮັບໃຊ້ພຣະອົງ ຫຼືໃນການຮັບໃຊ້ຊີວິດຂອງຄົນອື່ນບໍ? ຈົ່ງພິຈາລະນາວ່າວຽກງານນັ້ນສະທ້ອນເຖິງພຣະລັກສນະຂອງພຣະເຈົ້າແນວໃດ? ຈົ່ງເຊື່ອຟັງພຣະອົງ ແລະຈົ່ງປ່ອຍໃຫ້ຄວາມຮັກແລະຄວາມເມດຕາສົງສານຂອງພຣະອົງຜູ້ທີ່ທ່ານປະຕິບັດຮັບໃຊ້ໃຫ້ໄດ້ປາກົດໃນຕົວທ່ານ.

ຜູ້ຄົນມັກຈະໄວໃນການໃຫ້ຄຳແນະນຳ ແລະແມ້ແຕ່ອ້າງເຫດຜົນວ່າພວກເພິ່ນເວົ້າໃນນາມພຣະເຈົ້າ. ແຕ່ຖ້າສິ່ງທີ່ພວກເຮົາໄດ້ຍິນນັ້ນບໍ່ໄດ້ສະທ້ອນເຖິງພຣະລັກສນະຂອງພຣະເຈົ້າ, ມັນບໍ່ຄຸ້ມຄ່າທີ່ຈະຟັງ. **ຈົ່ງພາກັນມາຮູ້ຈັກພຣະລັກສນະຂອງພຣະອົງໃຫ້ດີຄືຜູ້ທີ່ພວກເຮົາປະຕິບັດຮັບໃຊ້ກັນເຖີດ!**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**